# ບົດຂ່າວ

**ກະຊວງສາທາລະນະສຸກ ຕາງໜ້າໂດຍ ພະແນກສາທາລະນະສຸກ ແຂວງຜົ້ງສາລີ ແລະ ອົງການ ແຄຣ໌ ນານາຊາດ ປະຈຳ ສປປ ລາວ ລົງນາມ ບົດບັນທຶກຄວາມເຂົ້າໃຈ ເພື່ອປັບປຸງການເຂົ້າເຖິງນ້ຳສະອາດເພື່ອຄວາມທົນທານຕໍ່ການປ່ຽນແປງຂອງດິນຟ້າອາກາດຢູ່ ແຂວງຜົ້ງສາລີ**

**ທີ່ ແຂວງຜົ້ງສາລີ, ສປປ ລາວ — ວັນທີ 24 ມິຖຸນາ 2025 —** ພະແນກສາທາລະນະສຸກແຂວງຜົ້ງສາລີ ໄດ້ຕາງໜ້າໃຫ້ກະຊວງສາທາລະນະສຸກ ແລະ ອົງການ ແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ຮ່ວມກັນລົງນາມໃນບົດບັນທຶກຄວາມເຂົ້າໃຈ (MOU) ເພື່ອຈັດຕັ້ງປະຕິບັດໂຄງການໃໝ່ ຫົວຂໍ້ **"ໂຄງການ ສ້າງຄວາມເຂັ້ມແຂງໃນການເຂົ້າເຖິງນ້ຳສະອາດເພື່ອຄວາມທົນທານຕໍ່ການປ່ຽນແປງຂອງດິນຟ້າອາກາດຢູ່ ແຂວງຜົ້ງສາລີ (SWACR).** ໂຄງການນີ້ມີຈຸດປະສົງເພື່ອປັບປຸງການເຂົ້າເຖິງແຫຼ່ງນ້ຳສະອາດແບບຍືນຍົງທີ່ສາມາດສະໜອງໄດ້ຕະຫຼອດປີ ສຳລັບຊຸມຊົນໃນເຂດຫ່າງໄກສອກຫຼີກ ແລະ ເຂດທີ່ມີຄວາມສ່ຽງຕໍ່ຜົນກະທົບຈາກການປ່ຽນແປງສະພາບດິນຟ້າອາກາດ ຢູ່ ເມືອງໃໝ່ ແລະ ເມືອງສຳພັນ.

ໂຄງການໄລຍະ 5 ປີນີ້ ຈະໄດ້ຈັດຕັ້ງປະຕິບັດຈົນເຖິງວັນທີ 30 ກັນຍາ 2028 ໂດຍວຽກງານຂອງໂຄງການນີ້ແມ່ນໄດ້ສອດຄ່ອງກັບເປົ້າໝາຍຍຸດທະສາດແຫ່ງຊາດ ກ່ຽວກັບຄວາມປອດໄພດ້ານນ້ຳ, ສາທາລະນະສຸກ ແລະ ການປັບຕົວກັບການປ່ຽນແປງສະພາບດິນຟ້າອາກາດ.

**ໂຄງການນີ້ຈະສຸມໃສ່ຈັດຕັ້ງປະຕິດບັນດາກິດຈະກຳຫຼັກດັ່ງຕໍ່ໄປນີ້:**

- ຮັບປະກັນໃຫ້ທຸກຄອບຄົວໃນຊຸມຊົນເປົ້າໝາຍ ໄດ້ຮັບການເຂົ້າເຖິງປະລິມານນ້ຳສະອາດຢ່າງພຽງພໍໃນລະດັບຄົວເຮືອນ;
- ສ້າງຕົວແບບລະບົບນ້ຳລິນທີ່ສະໜອງນ້ຳດື່ມສະອາດແບບຍືນຍົງໃຫ້ແກ່ຄົວເຮືອນໄດ້ຮັບການຈັດຕັ້ງປະຕິບັດ ແລະ ນຳໃຊ້.
- ສ້າງຄວາມອາດສາມາດແກ່ບ້ານ ແລະ ເມືອງເປົ້າໝາຍ ເພື່ອຮັບປະກັນຄວາມຍືນຍົງທາງດ້ານວິຊາການ, ສັງຄົມ ແລະ ສິ່ງແວດລ້ອມຂອງລະບົບນ້ຳລິນທີ່ໄດ້ກໍ່ສ້າງໃຫ້.
- ສ້າງທາງເລືອກໃນການປັບຕົວຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດດ້ວຍການສ້າງແຮງຈູງໃຈຂອງຊຸມຊົນໃນການປົກປັກຮັກສາປ່າຍອດແຫຼ່ງນ້ຳ/ ການຂະຫຍາຍເນື້ອທີ່ປ່າໄມ້ ເພື່ອປະກອບສ່ວນເຂົ້າໃນການເຂົ້າເຖິງນ້ຳສະອາດແບບຍືນຍົງ.

ຄາດວ່າຈະຜູ້ທີ່ໄດ້ຮັບຜົນປະໂຫຍດປະມານ 14,658 ຄົນ, ຈາກ 15 ຊຸມຊົນບ້ານເປົ້າໝາຍຂອງໂຄງການ ໂດຍກຸ່ມເປົ້າໝາຍຫຼັກແມ່ນແນໃສ່ແມ່ຍິງ ແລະ ເດັກ. ນອກນັ້ນຍັງຈະມີປະຊາຊົນປະມານ 14,658 ຄົນ (ຍິງ 8,235 ຄົນ) ຈາກຊຸມຊົນອ້ອມຂ້າງ ໄດ້ຮັບຜົນປະໂຫຍດທາງອ້ອມຂອງໂຄງການໂດຍຜ່ານການປັບປຸງການເຂົ້າເຖິງນ້ຳສະອາດ ແລະ ຄວາມທົນທານຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ.

ໂຄງການນີ້ ຈະໄດ້ຖືກຈັດຕັ້ງປະຕິບັດໂດຍການຮ່ວມມືຢ່າງໃກ້ຊິດກັບກົມອະນາໄມ ແລະ ສົ່ງເສີມສຸຂະພາບ, ແລະ ສູນນ້ຳສະອາດ ແລະ ສຸຂານາໄມສິ່ງແວດລ້ອມ, ເຊິ່ງໄດ້ສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງພວກເຮົາຕໍ່ການພັດທະນາແບບມີສ່ວນຮ່ວມ ແລະ ຍືນຍົງຕໍ່ໃນທຸກຂະແໜງການ ໃນ ສປປ ລາວ.

ການຮ່ວມມືນີ້ໄດ້ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດກ່ຽວກັບຄວາມທົນທານຕໍ່ສະພາບດິນຟ້າອາກາດ, ຄວາມສະເໝີພາບດ້ານສຸຂະພາບ, ແລະ ປັບປຸງຄຸນນະພາບຊີວິດການເປັນຢູ່ໃນຊຸມຊົນທີ່ດ້ອຍໂອກາດ.

# PRESS RELEASE

**Ministry of Health Represented by Phongsaly Provincial Health Department and CARE International in Lao PDR Sign MOU to Improve Climate-Resilient Water Access in Phongsaly Province**

**Phongsaly, Lao PDR — 24 June 2025** — The Phongsaly Provincial Health Department, under the Ministry of Health, and CARE International in Lao PDR have signed a Memorandum of Understanding (MOU) to implement a new initiative titled ***"Strengthening Water Access for Climate Resilience in Phongsaly Province (SWACR)."*** This project aims to improve year-round access to safe and sustainable water for communities in remote and climate-vulnerable areas of Mai and Samphan districts.

The five-year project will run until **30 September 2028**. The initiative supports national goals in water security, public health, and climate change adaptation.

**The project will focus on the following key areas:**

- Ensuring all families in the target communities have continuous access to adequate volumes of safe water at the household level;
- Developing and implementing sustainable models for clean drinking water supply;
- Strengthening technical, social, and environmental capacities at village and district levels to ensure long-term system sustainability;
- Piloting climate-resilient adaptation options that promote community-driven watershed forest protection and water source sustainability.

The project is expected to benefit an estimated **14,658 people** from 15 communities. The initiative is being implemented in close collaboration with the **Hygiene and Health Promotion Department** and the **Center of Water Supply and Environmental Health**, reflecting a strong cross-sector commitment to inclusive and sustainable development in Lao PDR.

This partnership contributes to the national agenda on climate resilience, health equity, and improved quality of life in underserved communities.